6. ພິຈາລະນາ ແລະ ແຕ່ງຕັ້ງຜູ້ອຳນວຍການແທນຜູ້ອຳນວຍການທີ່ລາອອກ ຈຳນວນ 3 ທ່ານ ເພື່ອສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ອະນຸມັດຕໍ່ໄປ.
7. ເຫັນດີໃຫ້ສະເໜີແກ່ກອງປະຊຸມຜູ້ຖືຮຸ້ນເພື່ອຮັບຮອງການປ່ຽນແປງກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດບໍລິສັດ ແລະ ເອກະສານທາງດ້ານທະບຽນຂອງບໍລິສັດ
8. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາ ແລະ ອະນຸມັດໃຫ້ຜູ້ອຳນວຍການດຳເນີນທຸລະກິດ ຄື ສັນຍາເຊົ່າທີ່ດິນເພື່ອຂະຫຍາຍສາຂາຂອງບໍລິສັດ.
9. ກຳນົດວັນເວລາ ແລະ ສະຖານທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເຊິ່ງກຳນົດເອົາ ວັນທີ 22 ເມສາ 2016 ເວລາ 10:00 ໂມງ ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ພ້ອມທັງສະເໜີວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ດັ່ງລາຍລະອຽດລຸ່ມນີ້:

ວາລະທີ1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2015 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2015;
ວາລະທີ2. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2016;
ວາລະທີ3. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນປະກອບການປີ 2015;
ວາລະທີ4. ພິຈາລະນາ ແລະ ອະນຸມັດການມອບອຳນາດໃຫ້ສະພາບໍລິຫານໃນການຈ່າຍເງິນປັນຜົນລະຫວ່າງປີ 2016;
ວາລະທີ5. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2016;
ວາລະທີ6. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການແທນຜູ້ອຳນວຍການທີ່ລາອອກ ຈຳນວນ 3 ທ່ານ;
ວາລະທີ7. ພິຈາລະນາ ແລະ ສະເໜີໃຫ້ມີການແກ້ໄຂໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ເອກະສານທາງດ້ານທະບຽນຂອງບໍລິສັດ;
- ພິຈາລະນາ ແລະ ສະເໜີໃຫ້ມີການແກ້ໄຂໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດກ່ຽວກັບສາຂາຂອງບໍລິສັດ;
- ພິຈາລະນາ ແລະ ສະເໜີໃຫ້ມີການແກ້ໄຂກົດລະບຽບຂອງບໍລິສັດກ່ຽວກັບຜູ້ອຳນວຍການ;
- ພິຈາລະນາ ແລະ ສະເໜີໃຫ້ມີການແກ້ໄຂກົດລະບຽບຂອງບໍລິສັດກ່ຽວກັບຂໍ້ຫ້າມສຳລັບຜູ້ອຳນວຍການ;

ວາລະທີ 8. ພິຈາລະນາ ແລະ ອະນຸມັດໃຫ້ບໍລິສັດສາມາດເຮັດທຸລະກິດ ແມ່ນສັນຍາເຊົ່າທີ່ດິນເພື່ອຮອງຮັບການຂະຫຍາຍສາຂາຂອງບໍລິສັດ ນຳຜູ້ອຳນວຍການຂອງບໍລິສັດໄດ້;
- ພິຈາລະນາ ແລະ ຕົກລົງເລື່ອງການລົງຄະແນນສຽງຂອງຜູ້ຖືຮຸ້ນທີ່ມີສ່ວນໄດ້ສ່ວນເສຍໂດຍກົງກັບບັນຫາທີ່ລົງຄະແນນສຽງ; ແລະ

ວາລະທີ 9. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງຂໍຮຽນມາເພື່ອຮັບຊາບ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ປະທານສະພາບໍລິຫານ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ທ່ານ ອຸ່ນ ຫຼ້າສຸກັນ